ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການແລະ ຂົນສົ່ງ
ຫ້ອງການ

ເລກທີ 5011 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 4 ມີນາ 2026

# ໜັງສືເຊີນເຂົ້າຮ່ວມການປະມູນ

ເຖິງ: ບັນດາ ບໍລິສັດຕ່າງໆ ທີ່ສົນໃຈເຂົ້າຮ່ວມການປະມູນ ການບໍລິການອະນາໄມ ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ ປະຈໍາປີ 2026.

1. ຫ້ອງການ ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ຮັບອະນຸມັດງົບປະມານ ປະຈໍາສົກປີ 2026 ເພື່ອດໍາເນີນການປະມູນເປີດກວ້າງພາຍໃນ ເພື່ອເອົາບໍລິສັດຜູ້ຮັບເໝົາການບໍລິການອະນາໄມ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ ປະຈໍາປີ 2026;
2. ການປະມູນນີ້ ຈະດໍາເນີນຕາມຂັ້ນຕອນການປະມູນ ທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ຜູ້ປະມູນຕ້ອງມີສໍາເນົາເອກະສານໃບອະນຸຍາດດໍາເນີນທຸລະກິດດ້ານການບໍລິການອະນາໄມ ແລະ ໃບມອບພັນທະອາກອນປີ 2024 ຫຼື 2025 ທີ່ຖືກຕ້ອງຕາມກົດໝາຍ;
4. ບໍລິສັດທີ່ມີເງື່ອນໄຂເໝາະສົມ ແລະ ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນ ແລະ ເຮັດໜັງສືເຈດຈໍານົງຊື້ເອກະສານປະມູນ ໄດ້ທີ່ຫ້ອງການ ກະຊວງໂຍທາທິການ ແລະ ຂົນສົ່ງ, ຕັ້ງຢູ່ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ. ຕຶກຫ້ອງການ ຫ້ອງ 104 ຊັ້ນ 01 ພະແນກຈັດຕັ້ງ-ບໍລິຫານ ແລະ ພິທີການໃນໂມງລັດຖະການ, ໂທ: (856-21 450316, 020 97100629), ເລີ່ມແຕ່ວັນທີ 05 ມີນາ ຫາວັນທີ 08 ເມສາ 2026, ໃນລາຄາ 500,000 ກີບ/ຊອງ. ຈໍານວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ),
5. ຊອງປະມູນ ຕ້ອງສົ່ງກ່ອນເວລາ 09:30 ໂມງ ຂອງວັນທີ 08 ເມສາ 2026 ທີ່ຫ້ອງປະຊຸມຫ້ອງການ ຊັ້ນ 2 ຕຶກຫ້ອງການ ແລະ ຊອງປະມູນໃດສົ່ງຊ້າເກີນເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາດຽວກັນໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງບໍລິສັດ ທີ່ສົນໃຈເຂົ້າຮ່ວມປະມູນ;

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດຕ່າງໆທີ່ສົນໃຈ ເພື່ອເຂົ້າຮ່ວມການສົມທຽບແຂ່ງຂັນລາຄາວຽກດັ່ງກ່າວ ໃນຄັ້ງນີ້ດ້ວຍ.

ເຊັນແທນ ຫົວໜ້າຫ້ອງການ
ຮອງຫົວໜ້າຫ້ອງການ

ມະນີວອນ ໄຕ້ຍະວົງ